ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 27 ຫາ 31 ມີນາ 2023



ການຜະລິດພືດເພື່ອຄໍ້າປະກັນສະບຽງອາຫານ ແລະ ການປູກພືດເປັນສິນຄ້າຂອງແຂວງຫຼວງນໍ້າທາ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ການຜະລິດພືດເພື່ອຄໍ້າປະກັນສະບຽງອາຫານ ແລະ ການປູກພືດເປັນສິນຄ້າຂອງແຂວງຫຼວງນໍ້າທາ

ທ່ານ ພິມແກ້ວ ທຳລາສິນ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ແຂວງຫຼວງນໍ້າທາ ໄດ້ລາຍງານສະພາບການຜະລິດໃຫ້ຮູ້ວ່າ: ແຂວງຫຼວງນໍ້າທາແມ່ນມີທ່າແຮງໃນການຜະລິດເນື່ອງຈາກມີຂອບເຂດຊາຍແດນຕິດກັບ ສປ ຈີນ ມີດ່ານສາກົນ 1 ແຫ່ງ, ດ່ານ ທ້ອງຖິ່ນ 2 ແຫ່ງ, ດ່ານ ປະເພນີ 1 ແຫ່ງ, ເສັ້ນທາງການຄົມມະນາຄົມກໍ່ມີຄວາມສະດວກ ເຮັດໃຫ້ດ້ານການຕະຫລາດການຄ້າຂາຍຂອງປະຊາຊົນພາຍໃນແຂວງມີຄວາມສະດວກໃນດ້ານການສົ່ງອອກໄປ ສປ ຈີນ, ສະພາບການຜະລິດໄລຍະຜ່ານມາໄດ້ຮັບຜົນກະທົບ ການລະບາດຂອງພະຍາດໂຄວິດ-19, ການລະບາດຂອງພະຍາດສັດອະຫິວາໝູອະຟຣິກາ ເຮັດໃຫ້ການຜະລິດຂອງຊາວກະສິກອນ ແລະ ການນຳເຂົ້າປັດໄຈການຜະລິດ, ການສົ່ງອອກຜົນຜະລິດຕ່າງໆຂອງພໍ່ແມ່ປະຊາຊົນພາຍໃນແຂວງພົບກັບຄວາມຫຍຸ້ງຍາກ, ແຕ່ມາຮອດປັດຈຸບັນນີ້ຍ້ອນຄວາມເອົາໃຈໃສ່ຂອງພັກ ແລະ ລັດ



ທ່ານ ພິມແກ້ວ ທຳລາສິນ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ແຂວງຫຼວງນໍ້າທາ






ຖະບານ ເວົ້າລວມເວົ້າສະເພາະກໍ່ຄືກະຊວງກະສິກຳ ແລະ ປ່າໄມ້, ບັນດາກົມອ້ອມຂ້າງກະຊວງໄດ້ໃຫ້ຄວາມສຳຄັນເອົາໃຈໃສ່ຕິດຕາມຊຸກຍູ້ກດ້ານວິຊາການ, ການຊ່ວຍເຫຼືອດ້ານເຕັກນິກ ແລະ ທຶນຮອນຈຳນວນໜຶ່ງ ບວກໃສ່ການເອົາໃຈໃສ່ຊີ້ນຳໆພາຂອງຄະນະພັກ ອົງການປົກຄອງແຂວງ ເຮັດໃຫ້ບັນຫາດັ່ງກ່າວໄດ້ຖືກແກ້ໄຂ, ມາຮອດປັດຈຸບັນພໍ່ແມ່ປະຊາຊົນສາມາດທຳການຜະລິດໄດ້ເປັນປົກກະຕິ ມີຄວາມສະດວກສະບາຍ ແລະ ດີຂື້ນກວ່າແຕ່ເກົ່າ.

ປະຊາຊົນໄດ້ມີການຫັນຈາກການຜະລິດຈາກແບບທຳມະຊາດ ເຄິ່ງທຳມະຊາດມາເປັນການຜະລິດແບບໃໝ່ໂດຍໃຊ້ກົນຈັກເຂົ້າຊ່ວຍນັບມື້ນັບຫຼາຍຂື້ນ ເຊິ່ງໄດ້ກວມເອົາ 85 ສ່ວນຮ້ອຍຂອງການຜະລິດພາຍໃນແຂວງ, ການຜະລິດເປັນສິນຄ້າກໍ່ເລີ່ມເປັນຂະບວນກວ້າງຂວາງ ໃນນີ້ການຜະລິດເພື່ອຄ້ຳປະກັນສະບຽງອາຫານແມ່ນການປູກເຂົ້າເປັນຕົ້ນ ຕໍໃນທົ່ວແຂວງມີເນື້ອທີປູກເຂົ້າທັງໝົດ 18.000-19.000 ເຮັກຕາ/ປີ, ໃນປີນີ້ສາມາດຜະລິດໄດ້ 60.000 ໂຕນ, ສະເລ່ຍ 360 ກິໂລກຼາມຕໍ່ຄົນ ຖືວ່າກຸ້ມກິນ. ຕໍ່ກັບການຜະລິດລະດູແລ້ງນີ້ປັດສະເພາະເຂົ້ານາແຊງຕົວເລກຄາດໝາຍແມ່ນ 630 ເຮັກຕາປະຕິບັດໄດແທ້ 137 ເຮັກຕາ, ສາເຫດເນື່ອງຈາກປະຊາຊົນຫັນໄປປູກພືດລະດູແລ້ງຊະນິດອື່ນທີ່ມີລາ ຄາສູງຫຼາຍຂື້ນ ເພື່ອສົ່ງອອກໄປ ສປ ຈີນ, ດ້ານວຽກງານການລ້ຽງສັດ ສະເພາະໝູມີທັງໝົດ 36 ຟາມ, ຟາມຂະໜາດໃຫຍ່ 1 ແຫ່ງ ຊຸດໜຶ່ງຜະລິດໄດ້ 2.000 ໂຕ ແຕ່ຍ້ອນການລະບາດຂອງພະຍາດອະຫິວາໝູອາຟຣິກາໃນໄລຍະປີ 2019-2020, ເຮັດໃຫ້ຊາວກະສິກອນແມ່ນຍັງບໍ່ສາມາດຟື້ນຕົວ ຈຳເປັນໃນການນຳເຂົ້າໝູຈາກຕ່າງປະເທດເຂົ້າມາບໍລິໂພກພາຍໃນແຂວງຈຳນວນໜຶ່ງ.

ດ້ານການປູກພືດເປັນສິນຄ້າ ອີງໃສ່ຈຸດພິເສດຂອງແຂວງທີ່ມີເຂດພູດອຍກວມ 85 ສ່ວນຮ້ອຍ ທາງແຂວງໄດ້ເລັ່ງໃສ່ການຢຸດຕິການຖາງປ່າເຮັດໄຮ່,



ການສົ່ງເສີມປະຊາຊົນປູກໄມ້ອຸດສາຫະກຳ, ໄມ້ໃຫ້ໝາກ ແລະ ພືດທົດແທນ ບູລິມະສິດທີ 1 ແມ່ນການປູກຢາງພາລາໄດ້ກວມເອົາເນື້ອທີ່ທັງໝົດ 36,800 ກວ່າເຮັກຕາ ສາມາດຂີດຢາງໄດ້ 35.000-36.000 ກວ່າເຮັກຕາໃນແຕ່ລະປີ ສະເລ່ຍການສົ່ງອອກຢາງໄດ້ 120.000 ໂຕນ, ປີໜຶ່ງສ້າງລາຍຮັບເກືອບ 900 ຕື້ກີບ. ການປູກອ້ອຍຂອງຊາວກະສິກອນ ຢູ່ເມືອງສິງ ແລະ ເມືອງ ລອງ ກໍ່ມີການເຕີບໂຕຂຶ້ນເລື້ອຍໆ ເຊິ່ງສາມາດບັນລຸ 10,900 ເຮັກຕາ ເກັບກູ້ ແລ້ວ 5 ແສນກວ່າໂຕນ ຄາດວ່າປີນີ້ຈະເກັບກູ້ໄດ້ 8-9 ແສນໂຕນ ເຊິ່ງການເກັບກູ້ຈະສຳເລັດໃນເດືອນ ພຶດສະພານີ້, ເນື້ອທີ່ປູກມັນຕົ້ນ ມີປະມານ 2.000 ກວ່າເຮັກຕາ ຜົນຜະລິດຕໍ່າສຸດ ແມ່ນໄດ້ 43.000-60.000 ໂຕນຕໍ່ປີ ເຊິ່ງປະຊາຊົນໄດ້ມີການປູກສົ່ງໃຫ້ໂຮງງານເພື່ອຜະລິດເປັນແປ້ງມັນຕົ້ນສົ່ງອອກໄປ ສປ ຈີນ, ນອກນີ້ຍັງມີພື້ນທີ່ກ້ວຍ 900 ກວ່າເຮັກຕາລື່ນຄາດໝາຍ 30 ກວ່າສ່ວນຮ້ອຍ, ແຕງໂມ, ໝາກອຶ, ຖົ່ວເຫຼືອງ, ຖົ່ວຊຽງອີກ 526 ເຮັກຕາ ເຊິ່ງເນື້ອທີ່ປູກໃນປີນີ້ແມ່ນລື່ນຄາດໝາຍ 21 ສ່ວນຮ້ອຍ. ດ້ານຂໍ້ຫຍຸ້ງຍາກຊາວກະສິກອນພາຍໃນແຂວງອັນຫຼັກໆ ກໍ່ຍັງແມ່ນບັນຫາຜົນກະທົບທີ່ສືບເນື່ອງຈາກຈາກການລະບາດຂອງພະຍາດອະຫິວາໝູອາຟຣິກາໃນ 2 ປີຜ່ານມາ ຊາວກະສິກອນຍັງບໍ່ທັນຟື້ນໂຕມາເຮັດການຜະລິດໄດ້ເຕັມທີ່, ອັນທີສອງແມ່ນຈາກສະພາບການເບັ່ງຕຶງຂອງສິນຄ້າຄວາມຫຍຸ້ງ ຍາກດ້ານເສດຖະກິດ ຜູ້ລົງທຶນຈຳນວນໜຶ່ງບໍ່ທັນໝັ້ນໃຈໃນການລົງທຶນ ການເບັ່ງຕຶງຂອງລາຄາສິນຄ້າແມ່ນສິ່ງຜົນກະທົບໂດຍກົງຕໍ່ກັບຕົ້ນທຶນການຜະລິດເຮັດໃຫ້ມີຕົ້ນທຶນສູງການລົງທຶນທີ່ຂາຍແລ້ວບໍ່ມີກຳໄລ ຫຼື ເທົ່າທຶນຈຳເປັນຕ້ອງໄດ້ຂຶ້ນລາຄາສິນຄ້າ ເຮັດໃຫ້ຊາວກະສິກອນບໍ່ມີຄວາມເຊື່ອໝັ້ນໃຈໃນການລົງທຶນດ້ານກະສິກຳເທົ່າທີ່ຄວນ.

**ຄະນະຮັບຜິດຊອບ:**
ທ່ານ ສີປະໄພ ໄຊສິງຄານ
ທ່ານ ສີສະຫວາດ ຫອມດາລາ

**ບັນນາທິການ:**
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

**ຈັດໜ້າອອກແບບໂດຍ:**
ທ່ານ ນ. ສີອຳນອນ ໄຊຍະລາດ

**ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່:** ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;